**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ເຈົ້າແຂວງ** ເລກທີ 778/ຈຂ.ບກ

ບໍ່ແກ້ວ, ວັນທີ 02 ສິງຫາ 2018.

# ຄຳສັ່ງ

## ວ່າດ້ວຍ ການເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວ ສາສະໜາ ຢູ່ແຂວງບໍ່ແກ້ວ

**ເຖິງ:** ບັນດາພະແນກການ-ອົງການອ້ອມຂ້າງແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ທ່ານເຈົ້າເມືອງ 05 ເມືອງ, ອຳນວຍການລັດວິສາຫະກິດ, ໂຮງຮຽນການເມືອງ-ການປົກຄອງແຂວງ ແລະ ອົງການປົກຄອງບ້ານໃນຂອບເຂດທົ່ວແຂວງ.

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- **ອີງຕາມ** ດຳລັດຂອງລັດຖະບານ ສະບັບເລກທີ 315/ລບ, ລົງວັນທີ 19 ສິງຫາ 2016 ແລະ ຄຳແນະນຳ ເລກທີ 16/ພບ, ລົງວັນທີ 9 ພະຈິກ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວ ສາສະໜາ ຢູ່ ສປປ ລາວ.
- **ອີງຕາມ** ຄຳສັ່ງຂອງທ່ານເຈົ້າແຂວງ ແຂວງບໍ່ແກ້ວ ສະບັບເລກທີ 303/ຈຂ.ບກ, ລົງວັນທີ 15 ມີນາ 2017 ວ່າດ້ວຍ ການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທີ່ ພົ້ນເດັ່ນພາຍໃນ ແຂວງ.

ນັບຕັ້ງແຕ່ປີ 2015 ທີ່ຜ່ານມາ ຄະນະພັກ - ອົງການປົກຄອງແຂວງ ບໍ່ແກ້ວ ໄດ້ຕັ້ງໜ້າສຸມໃສ່ຈັດຕັ້ງ-ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງອົງຄະນະພັກແຂວງ ແລະ ຈັດຕັ້ງ-ປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງລັດ ຄັ້ງທີ VIII ເຂົ້າສູ່ຊີວິດຕົວຈິງດ້ວຍຈິດໃຈບຸກທະລຸທັງ 4 ດ້ານ ຢ່າງແຂງແຮງ. ພ້ອມກັນນັ້ນ, ເພື່ອຮັບປະກັນໃຫ້ແຂວງບໍ່ແກ້ວ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ-ປອດໄພ, ປະຊາຊົນມີຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາຄະນະພັກ-ອົງການປົກຄອງແຕ່ລະຂັ້ນໄດ້ເອົາໃຈໃສ່ທັນລົງກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ, ຊຸກຍູ້ວຽກງານ 03 ສ້າງ ແລະ ສືບຕໍ່ຈັດຕັ້ງ-ຜັນຂະຫຍາຍຄຳສັ່ງ ເລກທີ 27/ນຍ, ວ່າດ້ວຍ ການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທົ່ວສັງຄົມ, ດຳລັດຂອງລັດຖະບານ ເລກທີ 315/ລບ ແລະ ຄຳສັ່ງແນະນຳເລກ

ທີ 16/ພນ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ, ຄໍາສັ່ງຂອງທ່ານເຈົ້າແຂວງ ແຂວງບໍ່ແກ້ວ ສະບັບເລກທີ 303/ຈຂ.ບກ , ລົງວັນທີ 15 ມີນາ 2017 ວ່າດ້ວຍການເພີ່ມທະວີວຽກງານສະ ກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ພົ້ນເດັ່ນພາຍໃນແຂວງ. ເຊິ່ງໄດ້ຈັດຕັ້ງ - ຜັນຂະຫຍາຍເນື້ອໃນເອກະສານຕ່າງໆ ໃຫ້ຄະນະພັກ - ອົງການປົກຄອງແຕ່ລະຂັ້ນ ແລະ ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນຢູ່ໃນສັງຄົມ, ທ້ອງຖິ່ນ - ຮາກຖານຂັ້ນບ້ານໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງກ້ວາງຂວາງພໍສົມຄວນ.

ເຖິງແນວໃດກໍຕາມພວກເຮົາກໍ່ຍັງສັງເກດເຫັນວ່າປະກົດການຫຍໍ້ທໍ້ໃນສັງຄົມໂດຍສະເພາະການເຄື່ອນໄຫວສາສະໜາ ທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍຂອງລັດ ແມ່ນສືບຕໍ່ເກີດຂຶ້ນຢ່າງຕໍ່ເນື່ອງ, ມີທ່າອ່ຽງຂະຫຍາຍຕົວ ແລະ ມີລັກສະນະແຜ່ລາມ ເຊິ່ງໄດ້ສະແດງອອກເຊັ່ນ: ມີການໂຄສະນາຊວນເຊື່ອ, ປຸກລະດົມຂົນຂວາຍ ໃຫ້ສາສະນິກະຊົນເຊື່ອຖືສາສະໜາຂອງຕົນແບບຕົວະຍົວະ, ຫຼອກລວງ, ຊື້ຈ້າງຈອບອອຍດ້ວຍຮູບການຕ່າງໆ, ການເຄື່ອນໄຫວສາສະໜາບໍ່ສອດຄອງກັບຫຼັກທໍາຄໍາສອນໃນພຣະຄໍາພີ, ຝືນວິທະຍາສາດ,ຂັດກັບຮີດຄອງປະເພນີ ແລະ ແນວທາງນະໂຍບາຍຂອງພັກ-ລັດ, ມີລັກສະນະແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າ ແລະ ສາສະໜາ ມີແນວຄິດຈໍາແນກແຍກຕົວອອກຈາກອົງການປົກຄອງບ້ານ, ບໍ່ຢາກປະຕິບັດພັນທະໜ້າທີ່ຂອງພົນລະເມືອງ; ເວົ້າລວມແລ້ວການຈັດຕັ້ງສາສະໜາ, ການແຕ່ງຕັ້ງຜູ້ສອນສາສະໜາ, ການເຄື່ອນໄຫວສາສະໜາ ແລະ ການປຸກສ້າງບ່ອນນະມັດສະການ, ໂບດ ແລະ ບ່ອນປະຕິບັດທໍາຂອງສາສະໜາຕົນສ່ວນໃຫຍ່ແມ່ນບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນຕ່າງໆ.

ເພື່ອເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວ ສາສະໜາ ຢູ່ແຂວງບໍ່ແກ້ວ ໃຫ້ທັນເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ, ສະຫງົບປອດໄພ, ຖືກຕ້ອງຕາມລະບຽບການ ທີ່ກໍານົດໄວ້ ຢູ່ດໍາລັດ 315/ລບ, ແລະ ຄໍາສັ່ງແນະນໍາ ເລກທີ 16/ພນ ຢ່າງເຂັ້ມງວດ.

## ເຈົ້າແຂວງ ອອກຄໍາສັ່ງ:

**I. ກໍາແໜັນຈຸດປະສົງ - ຄາດໝາຍ ຂອງການເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວສາສະໜາ ຢູ່ແຂວງບໍ່ແກ້ວ.**

**1. ຈຸດປະສົງ-ຄາດໝາຍຂອງຄໍາສັ່ງ.**

1.1. ຮັບປະກັນໃຫ້ແຂວງບໍ່ແກ້ວສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍສະຫງົບ-ປອດໄພ, ສ້າງສະພາບແວດລ້ອມທີ່ດີ ເພື່ອດຶງດູດເອົາການລົງທຶນຈາກນັກທຸລະກິດເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ດຶງດູດເອົານັກທ່ອງທ່ຽວ, ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່ານັບມື້ນັບດີຂຶ້ນ ພ້ອມກັບອັດຕາການເຕີບໂຕຂອງ GDP ໃຫ້ຢູ່ໃນລະດັບ 7,9% ຂຶ້ນໄປ,ໃນແຕ່ລະປີ ແລະ ລວມຍອດຜະລິດຕະພັນພາຍໃນສະເລ່ຍໃຫ້ໄດ້ 2.079,77 ໂດລາສະຫະລັດຕໍ່ຄົນຕໍ່ປີ.

1.2. ສ້າງຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ຢູ່ຮາກຖານ ໃຫ້ມີຄວາມໜັກແໜ້ນຂຶ້ນຢ່າງຕໍ່ເນື່ອງ ໂດຍສຸມໃສ່ການປັບປຸງລະບົບການເມືອງ - ການປົກຄອງຢູ່ຂັ້ນບ້ານໃຫ້ເປັນເຈົ້າການຕື່ນຕົວເຂົ້າຮ່ວມໃນການປົກປັກຮັກສາ, ພັດທະນາບ້ານຊ່ອງຂອງຕົນ ແນໃສ່ສ້າງກຳລັງແຮງຕົວຈິງໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຢູ່ໃນສັງຄົມ ດ້ວຍຕົນເອງ, ຮັບປະກັນ ບໍ່ໃຫ້ມີເຫດການວຸ້ນວາຍທາງການເມືອງເກີດຂຶ້ນຢູ່ຮາກຖານ, ນຳພາປະຊາຊົນຈັດຕັ້ງ - ປະຕິບັດການຈັດລະບຽບສັງຄົມໃຫ້ເປັນຂະບວນການຟົດຟື້ນ ໂດຍມີການປຸກລະດົມໃຫ້ທົ່ວສັງຄົມເຂົ້າຮ່ວມ.

1.3. ເຮັດໃຫ້ເປົ້າໝາຍສິ່ງຫຍໍ້ທໍ້ໂດຍສະເພາະການເຄື່ອນໄຫວສາສະໜາ ທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍຂອງລັດ ເຊິ່ງເປັນໄພອັນຕະລາຍຕໍ່ລະບອບປະຊາທິປະໄຕປະຊາຊົນ ກໍຄືຕໍ່ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃຫ້ໄດ້ຮັບການແກ້ໄຂຢ່າງເດັດຂາດ ແລະ ທ່ວງທັນເວລາ, ໂດຍມີວິທີການ, ມີມາດຕະການແກ້ໄຂທີ່ຖືກຕ້ອງເໝາະສົມ, ແນໃສ່ເຮັດໃຫ້ປະກົດການຫຍໍ້ທໍ້ດັ່ງກ່າວມີລັກສະນະຫຼຸດນ້ອຍຖອຍລົງເທື່ອລະກ້າວ, ບາງດ້ານຕ້ອງແກ້ໄຂໃຫ້ມີລັກສະນະຂາດຕົວໂດຍໄວ.

1.4. ເພີ່ມທະວີຄວາມສັກສິດ, ປະສິດທິຜົນໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ - ສັງຄົມດ້ວຍກົດໝາຍ ຂອງບັນດາພະແນກການ-ອົງການອ້ອມຂ້າງແຂວງ ແລະ ຫ້ອງການ-ອົງການອ້ອມຂ້າງເມືອງໃຫ້ເຂັ້ມງວດຍົກສູງສະຕິຄວາມຮັບຜິດຊອບ, ປັບປຸງຂີດຄວາມສາມາດໃນການປະຕິບັດໜ້າທີ່ຂອງອົງການຈັດຕັ້ງພັກ-ລັດເພື່ອບໍລິ ການຮັບໃຊ້ປະຊາຊົນໃຫ້ດີຂຶ້ນ, ເຕົ້າໂຮມປຸກລະດົມມະຫາຊົນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາທ້ອງຖິ່ນຮາກຖານ,ແກ້ໄຂປະກົດການຫຍໍ້ທໍ້, ຕີຖອຍທຸກກົນອຸບາຍຍຸແຍ່, ແບ່ງແຍກຂອງກຸ່ມຄົນທີ່ບໍ່ຫວັງດີ.

**II. ກຳແໜ້ນວິທີການແກ້ໄຂ ການເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວສາສະໜາ ຢູ່ແຂວງບໍ່ແກ້ວ.**

**1. ວິທີການແກ້ໄຂ.**

1.1. ພະແນກພາຍໃນແຂວງ, ຫ້ອງການພາຍໃນເມືອງ, ແນວລາວສ້າງຊາດແຂວງ, ແນວລາວສ້າງຊາດເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ສືບຕໍ່ທັບລົງຮາກຖານຢ່າງແຂງແຮງເພື່ອສົມທົບກັບອົງການປົກຄອງບ້ານຮີບຮ້ອນຈັດຕັ້ງເຜີຍແຜ່ຂະຫຍາຍ, ຄົ້ນຄ້ວາເຊື່ອມຊຶມຢ່າງເລິກເຊິ່ງແລະທົ່ວເຖິງເນື້ອໃນດຳລັດ 315/ລບ, ຄຳແນະນຳເລກທີ 16/ພນວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ, ຄຳສັ່ງຂອງເຈົ້າແຂວງ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວ ສາສະໜາ ຢູ່ແຂວງບໍ່ແກ້ວສະບັບນີ້ ແລະ ບັນດານິຕິກຳຂອງພັກ-ລັດ ວ່າດ້ວຍ ການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ຕາມພາລະບົດບາດ, ໜ້າທີ່ສິດຂອງແຕ່ລະພາກສ່ວນຢ່າງແຂງແຮງ, ຮັບປະກັນໃຫ້ປະຊາຊົນບັນດາເຜົ່າຮັບຮູ້ ເຂົ້າໃຈ ແລະ ກຳແໜ້ນຢ່າງເລິກເຊິ່ງ ແລະ ທົ່ວເຖິງ, ບໍ່ໃຫ້ມີກໍລະນີຕີກົງຄ້າງ.

- ນຳໃຊ້ພາຫະນະສື່ມວນຊົນໂດຍສະເພາະວິທະຍຸ, ໂທລະພາບ, ໜັງສືພິມ, ວາລະສານເພື່ອຈັດຕັ້ງເຊື່ອມ

ຊຶມໂຄສະນາ, ປຸກລະດົມຂົນຂວາຍໃຫ້ປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆໃນສັງຄົມຮັບຮູ້, ເຂົ້າໃຈເນື້ອໃນດຳລັດ 315/ລບ, ຄຳແນະນຳເລກທີ 16/ພນ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ, ຄຳສັ່ງ ຂອງເຈົ້າແຂວງ ວ່າດ້ວຍ ການເພີ່ມທະວີວຽກງານຄຸ້ມຄອງການເຄື່ອນໄຫວສາສະໜາ ຢູ່ແຂວງບໍ່ແກ້ວຢ່າງຕໍ່ເນື່ອງ.

**1.2.** ພະແນກພາຍໃນແຂວງ, ແນວລາວສ້າງຊາດແຂວງ, ຫ້ອງການພາຍໃນເມືອງ, ແນວລາວສ້າງຊາດເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ພ້ອມກັນອອກຮ່າງແບບຟອມເພື່ອເກັບກຳຂໍ້ມູນສະຖິຕິຜູ້ຖືສາສະໜາຕ່າງໆກຳນົດຮູບແບບວິທີການໃນການເກັບກຳຂໍ້ມູນສະຖິຕິຈຳນວນປະຊາຊົນທີ່ເຊື່ອຖືສາສະໜາໃຫ້ເປັນເອກະພາບກັນ, ມີລັກສະນະວິທະຍາສາດ, ຄົບຖ້ວນ, ຖືກຕ້ອງຊັດເຈນກ່ວາເກົ່າ.

- ສັງລວມສະພາບການເຄື່ອນໄຫວສາສະໜາຕ່າງໆ ພາຍໃນແຂວງ ເຊັ່ນ: ຈຳນວນສາສະໜາ, ຈຳນວນນິກາຍຕ່າງໆ, ການຈັດຕັ້ງສາສະໜາ, ຜູ້ສອນສາສະໜາ, ດ້ານຕັ້ງໜ້າ, ປະກົດການຫຍໍ້ທໍ້ ແລະ ໄພອັນຕະລາຍຂອງການເຄື່ອນໄຫວແຕ່ລະສາສະໜາ, ກວດກາຄືນສາສະໜາຕ່າງໆ ທີ່ຈັດຕັ້ງ-ເຄື່ອນໄຫວຢູ່ແຕ່ລະເມືອງ, ຄູສອນສາສະໜາຢູ່ແຕ່ລະບ້ານ, ການກໍ່ສ້າງໂບດ, ບ່ອນນະມັດສະການ ແລະ ບ່ອນປະຕິບັດທຳ ແລະ ບັນຫາອື່ນໆທີ່ບໍ່ຖືກຕ້ອງຕາມລະບຽບການເພື່ອນຳໄປສູ່ການແກ້ໄຂດ້ວຍລະບຽບການ, ກົດໝາຍຢ່າງເຂັ້ມງວດ ແລະ ໃຫ້ທ່ວງທັນເວລາ.

**1.3.** ອົງການປົກຄອງແຂວງ-ອົງການປົກຄອງເມືອງກະກຽມແຕ່ງຕັ້ງຄະນະສະເພາະກິດຂັ້ນຂອງຕົນເພື່ອລົງໄປສົມທົບກັບຄະນະພັກ-ອົງການປົກຄອງບ້ານ, ພະນັກງານຮາກຖານ, ໃນການວາງແຜນແກ້ໄຂປະກົດການຫຍໍ້ທໍ້ທີ່ພົ້ນເດັ່ນຢູ່ໃນສັງຄົມ, ໂດຍສະເພາະ ວຽກງານສາສະໜາ ດ້ວຍການເກັບກຳຂໍ້ມູນ, ວິໄຈຂໍ້ມູນ, ຂຶ້ນບັນຊີແຕ່ລະເປົ້າໝາຍ ແລະ ແກ້ໄຂຕົວຈິງແຕ່ລະເປົ້າໝາຍ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ, ຕາມທິດ: ສະພາບ-ບັນຫາເກີດຂຶ້ນຢູ່ບ່ອນໃດຕ້ອງແມ່ນບ່ອນນັ້ນທ້ອງຖິ່ນ-ຮາກຖານນັ້ນຕົນຕົວເປັນເຈົ້າການແກ້ໄຂດ້ວຍຄວາມຮັບຜິດຊອບສູງ.

**1.4.** ຄະນະພັກ-ອົງການປົກຄອງບ້ານ ແລະ ໜ່ວຍງານຕ່າງໆຂອງບ້ານຕ້ອງເພີ່ມທະວີ ຄວາມເອົາໃຈໃສ່ໃນການຄຸ້ມຄອງປົກປ້ອງການເຄື່ອນໄຫວສາສະໜາຢູ່ໃນຂອບເຂດທ້ອງຖິ່ນຮາກຖານບ້ານຂອງຕົນ ດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຕິດຕາມ, ກວດກາ ປະຊາຊົນບັນດາເຜົ່າທີ່ດຳລົງຊີວິດຢູ່ພາຍໃນບ້ານ, ປະຊາຊົນບ້ານອື່ນ ແລະ ປະຊາຊົນທີ່ເຄື່ອນຍ້າຍເຂົ້າມາຈາກບ່ອນອື່ນ, ຖ້າຫາກມີການເຄື່ອນໄຫວສາສະໜາທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍຂອງລັດ, ມີປະກົດການຢາກແຍກຕົວອອກຈາກພັກ-ລັດ, ບໍ່ປະຕິບັດພັນທະຂອງພົນລະເມືອງ ຕ້ອງຮີບຮ້ອນຊອກຫາວິທີການ ແລະ ມາດຕະການ ແກ້ໄຂແລ້ວລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ທ່ວງທັນກັບເວລາ.

**1.5.** ຍົກສູງປະສິດທິພາບແລະປະສິດທິຜົນຂອງວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ລຶບລ້າງຄວາມທຸກຍາກ, ຊຸກຍູ້ວຽກງານ 3 ສ້າງແລະແກ້ໄຂປະກົດການຫຍໍ້ທໍ້ຢູ່ໃນສັງຄົມໃຫ້ດີຂຶ້ນກ່ວາເກົ່າ,ເອົາໃຈໃສ່ສືບຕໍ່ປັບປຸງລະບົບການເມືອງ, ການປົກຄອງຢູ່ຂັ້ນບ້ານໃຫ້ນັບມື້ປອດໃສ, ເຂັ້ມແຂງ ແລະ

ໜັກແໜ້ນ, ເປັນໄປຕາມກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ປີ 2015, ດ້ວຍການສຸມໃສ່ດຳເນີນການສ້າງບ້ານນາມມະຍົດຕ່າງໆເຊັ່ນ: ສ້າງຄອບຄົວ ແລະ ບ້ານສາມັກຄີປອງດອງ, ສ້າງບ້ານປ້ອງກັນຊາດເຂັ້ມແຂງ, ສ້າງບ້ານປ້ອງກັນຄວາມສະຫງົບດີ ແລະ ອື່ນໆ, ຕິດພັນກັບການປຸງຮາກຖານພັກຂັ້ນບ້ານໃຫ້ເປັນຫຼັກແຫຼ່ງ ແລະ ເປັນກຳລັງແຮງຂອງລະບົບການເມືອງຢູ່ຮາກຖານໃຫ້ໄດ້.

**1.6.** ຄະນະພັກ-ອົງການປົກຄອງຂັ້ນຕ່າງໆ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ຊີ້ນຳ-ນຳພາຕ້ານສະກັດກັ້ນ, ແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບການເຄື່ອນໄຫວສາສະໜາໃຫ້ເປັນວຽກບູລິມະສິດສຳຄັນຂອງຕົນ, ເປັນວຽກທີ່ຕ້ອງເຮັດເປັນປົກກະຕິ, ຕໍ່ເນື່ອງ, ເລິກເຊິ່ງເຖິງຖອງ, ມີໝາກຜົນຕົວຈິງ; ໃນນີ້: ໃຫ້ສືບຕໍ່ລົງໂຄສະນາ, ປຸກລະດົມຂົນຂວາຍ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນໃນສັງຄົມ ເປັນເຈົ້າການເຂົ້າຮ່ວມຢ່າງກ້ວາງຂວາງ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຕ້ອງຫັນລົງສູ່ຮາກຖານ ເພື່ອສຶກສາອົບຮົມແນວຄິດໃຫ້ມະຫາຊົນເຫັນໄດ້ກົນອຸບາຍຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນທີ່ບໍ່ຫວັງດີ ກໍຄື ໄພອັນຕະລາຍຂອງການເຄື່ອນໄຫວສາສະໜາທີ່ບໍ່ຖືກຕ້ອງ.

**1.7.** ຫ້າມບໍ່ໃຫ້ມີການໂຄສະນາຊວນເຊື່ອ, ປຸກລະດົມຂົນຂວາຍໃຫ້ເຊື່ອຖືສາສະໜາຂອງຕົນແບບຕົວະຍົວະຫຼອກລວງ, ຊື້ຈ້າງຈອບອອຍດ້ວຍຮູບການຕ່າງໆ ແລະ ທຸກການສວຍໃຊ້ສາສະໜາເພື່ອຜົນປະໂຫຍດສ່ວນຕົວ ແລະ ຮັບໃຊ້ກົນອຸບາຍຂອງກຸ່ມຄົນທີ່ບໍ່ຫວັງດີ, ມີການເຄື່ອນໄຫວສາສະໜາທີ່ບໍ່ສອດຄ່ອງກັບຫຼັກທຳຄຳສອນໃນພຣະຄຳພີ, ຟົນວິທະຍາສາດ, ຂັດກັບຮີດຄອງປະເພນີ ແລະ ແນວທາງນະໂຍບາຍຂອງພັກ-ລັດ ກໍຄືລະບຽບຫຼັກການຂອງບ້ານ-ເມືອງ.

1.7.1. ຫ້າມບໍ່ໃຫ້ມີການເຄື່ອນໄຫວສາສະໜາທີ່ມີການແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າ ແລະ ສາສະໜາ ແນວຄິດຈຳແນກແຍກຕົວອອກຈາກອົງການປົກຄອງບ້ານ, ບໍ່ປະຕິບັດພັນທະໜ້າທີ່ຂອງພົນລະເມືອງ, ມີການຕົວະຍົວະຫຼອກລວງເອົາຊາວໜຸ່ມ-ເຍົາວະຊົນ ໄປທັດສະນະສຶກສາ, ໄປສາບານຕົນ ແລະ ໄປເຂົ້າຮ່ວມກິດຈະກຳຕ່າງໆ ຂອງສາສະໜາຢູ່ພາຍໃນ ແລະ ຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເດັດຂາດ.

## III. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລ່ວງລະເມີດ

### 1. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

- ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍຕາມລະບຽບການ.

### 2. ມາດຕະການຕໍ່ຜູ້ລະເມີດ

- ບຸກຄົນ ແລະ ການຈັດຕັ້ງທີ່ລະເມີດ ຄຳສັ່ງສະບັບນີ້ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໄໝ, ລົງວິໄນ, ໂຈະການເຄື່ອນໄຫວ, ຖອນໃບອານຸຍາດການເຄື່ອນໄຫວ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມລະບຽບ - ກົດໝາຍແລ້ວແຕ່ກໍລະນີສະຖານ ເບົາ ຫຼື ໜັກ.

**IV. ວິທີການຈັດຕັ້ງ-ປະຕິບັດ.**

1. ມອບໃຫ້ຄະນະພັກ - ອົງການປົກຄອງເມືອງ, ບ້ານ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກອງບັນຊາການ ປກຊ, ປກສ ແລະ ພະແນກການ-ອົງການອ້ອມຂ້າງແຂວງ, ຫ້ອງການ-ອົງການອ້ອມຂ້າງເມືອງ, ລັດວິສາຫະກິດ, ພະນັກງານຮາກຖານປະຈຳຢູ່ແຕ່ລະກຸ່ມບ້ານ ເປັນເຈົ້າການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ຄຳສັ່ງສະບັບນີ້ ໃຫ້ບັນດາພະນັກງານ - ສະມາຊິກພັກ, ປະຊາຊົນບັນດາເຜົ່າ ໃຫ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ, ກ້ວາງຂວາງ, ທັນເວລາ ແລະ ມີຜົນເປັນຮູບປະທຳໃນນີ້: ຮີບຮ້ອນຫັນເອົາເນື້ອໃນຈິດໃຈຂອງ ຄຳສັ່ງສະບັບນີ້ໃຫ້ເປັນແຜນວຽກ, ແຜນຄົນ ແລະ ແຜນງົບປະມານ, ທັງກຳນົດ ວິທີການ ແລະ ມາດຕະການລົງໄປຈັດຕັ້ງປະຕິບັດຢູ່ບ້ານເປົ້າໝາຍຕ່າງໆ ໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍ; ຖືເອົາວຽກງານດັ່ງກ່າວເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ.

2. ເອົາໃຈໃສ່ປະຕິບັດລະບອບຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ສະຫຼຸບ-ຕີລາຄາ, ຖອດຖອນບົດຮຽນສ່ອງແສງ - ລາຍງານ, ສັງລວມສະພາບການຈັດຕັ້ງ - ປະຕິບັດ ລາຍງານ ແລະ ຂໍຄຳເຫັນຈາກຂັ້ນເທິງຢ່າງເປັນປົກກະຕິ ແລະ ທັນເວລາ.

3. ມອບໃຫ້ຫ້ອງວ່າການແຂວງ ເປັນເຈົ້າການຊຸກຍູ້ຂະບວນການຈັດຕັ້ງ-ປະຕິບັດ ຄຳສັ່ງຂ້າງເທິງດັ່ງກ່າວໃຫ້ປະກົດຜົນເປັນຈິງ. ຜ່ານການເຮັດຕົວຈິງຕ້ອງຊອກໃຫ້ໄດ້ບຸກຄົນດີເດັ່ນ.

4. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ, ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ແຂວງບໍ່ແກ້ວ.**

ປອ ຄຳພັນ ເຜີຍຍະວົງ